**2. ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີບົດບາດແນວໃດ?**

ສຄຄຊ ມີພາລະບົດບາດເປັນກົງຈັກຊ່ວຍວຽກໃຫ້ແກ່ ຄຄຊ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວ ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ.

ສຄຄຊ ມີສິດ ແລະ ໜ້າທີ່ຕົ້ນຕໍ ຄື: ຄົ້ນຄວ້າ, ຮ່າງ ແລະ ປັບປຸງ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບກ່ຽວກັບວຽກງານຫຼັກຊັບ ເພື່ອສະເໜີຕໍ່ ຄຄຊ ພິຈາລະນາ, ພ້ອມທັງ ດໍາເນີນການແກ້ໄຂຂໍ້ຂັດແຍ່ງ ແລະ ດໍາເນີນການສືບສວນ-ສອບສວນຄະດີກ່ຽວກັບວຽກງານຫຼັກຊັບ; ຄົ້ນຄວ້າ ພິຈາລະນາການຮ້ອງຂໍອອກຈໍາໜ່າຍຫຼັກຊັບ ພ້ອມທັງຕິດຕາມກວດກາການເຄື່ອນໄຫວຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ; ຕິດຕາມກວດກາການເຄື່ອນໄຫວຂອງຕະຫຼາດຫຼັກຊັບ; ຄົ້ນຄວ້າຄໍາຮ້ອງຂໍສ້າງຕັ້ງສະຖາບັນສື່ກາງດ້ານຫຼັກຊັບ ເພື່ອນໍາສະເໜີຕໍ່ ຄຄຊ ພິຈາລະນາຮັບຮອງ ພ້ອມທັງຕິດຕາມກວດກາການເຄື່ອນໄຫວຂອງສະຖາບັນດັ່ງກ່າວ ແລະ ຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ; ຈັດຕັ້ງຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ມວນຊົນ ຕາມທິດຊີ້ນໍາຂອງ ຄຄຊ; ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ ຕາມການມອບໝາຍຂອງ ຄຄຊ.